**ໝາຍເລກເຄສ**:

ໜ່ວຍງານຂອງຄາວຕີ້ຂ້າງເທິງມີບັນທຶກທີ່ສະແດງໃຫ້ເຫັນວ່າທ່ານຕ້ອງຮັບຜິດຊອບຕໍ່ຍອດເງິນທີ່ບໍ່ໄດ້ຈ່າຍຄືນເຊິ່ງເປັນຜົນມາຈາກການຈ່າຍເງິນສະຫວັດດີການ CalFresh (ເຊິ່ງຕະກີ້ເອີ້ນວ່າສະແຕມອາຫານ). ເກີນ **ຈຳນວນເງິນທີ່ຮອດກຳນົດຊຳລະ: $**

ໜ່ວຍງານຂອງຄາວຕີ້ຂ້າງເທິງໄດ້ພະຍາຍາມເກັບເງິນຈາກທ່ານ, ລວມທັງສົ່ງຈົດໝາຍ ຮຽກຮ້ອງແຈ້ງໃຫ້ທ່ານຊາບກ່ຽວກັບຂໍ້ຮຽກຮ້ອງນີ້, ແລະສິດທິຂອງທ່ານທີ່ຈະໄດ້ຮັບການໄຕ່ສວນຢ່າງຍຸຕິທຳ ກ່ຽວກັບຂໍ້ຮຽກຮ້ອງນີ້. ຖ້າທ່ານບໍ່ຈ່າຍໜີ້ສິນຂອງທ່ານຫຼືກະທຳການໃດໜຶ່ງ ກ່ອນ 60 ວັນນັບແຕ່ວັນທີ່ແຈ້ງການນີ້, ໜ່ວຍງານຂອງຄາວຕີ້ຈະສົ່ງໜີ້ຂອງທ່ານໄປທີ່ United States Department of the Treasury (Treasury) Treasury Offset Program (TOP) ເພື່ອເກັບໜີ້ທີ່ຄ້າງ. ການກະທຳນີ້ໄດ້ຮັບອະນຸຍາດຕາມກົດໝາຍວ່າດ້ວຍການເກັບໜີ້ປີ 1982, ກົດໝາຍວ່າດ້ວຍການປັບປຸງການເກັບໜີ້ປີ 1996, ກົດລະບຽບຂອງລັດຖະບານກາງ 7 C.F.R. 273.18(n), ແລະກົດຂອງລັດ ມາຕຣາ 20-400. ເມື່ອໜີ້ສິນຂອງທ່ານຖືກສົ່ງໄປ TOP , Treasury ຈະຫຼຸດຫຼືເກັບເງິນສະຫວັດດີການຈາກລັດຖະບານກາງໃດໆ ທີ່ທ່ານມີສິດໄດ້ຮັບຕາມຈຳນວນໜີ້ຂອງທ່ານ. ການຈ່າຍເງິນຈາກລັດຖະບານທີ່ມີສິດໄດ້ຮັບເພື່ອນຳມາໃຊ້ໜີ້ລວມເຖິງ:

- ເງິນຄືນພາສີອາກອນຈາກລັດຖະບານກາງ, ລວມເຖິງເງິນເຄຣດິດພາສີອາກອນທີ່ໄດ້ຮັບ;
- ສູງເຖິງ 15% ຂອງເງິນເດືອນລັດຖະບານກາງຂອງທ່ານ, ລວມທັງເງິນເດືອນຂອງທະຫານ;
- ສູງເຖິງ 25% ຂອງເງິນກະສຽນວຽກຂອງລັດຖະບານກາງຂອງທ່ານ;
- ເງິນກະສຽນວຽກຂອງທະຫານ;
- ການຈ່າຍເງິນໃຫ້ຜູ້ຮັບເໝົາ / ຜູ້ຂາຍ; ແລະ/ຫຼື
- ການຈ່າຍເງິນຈາກລັດຖະບານກາງອື່ນ ໆ

ນອກຈາກນັ້ນ, Treasury ກໍ່ຍັງໄດ້ຮັບອະນຸຍາດໃຫ້ເພີ່ມການລົງໂທດ, ຄ່າທຳນຽມ, ຫຼືຄ່າໃຊ້ຈ່າຍອື່ນໆເຂົ້າລວມໃນໜີ້ທີ່ຍັງບໍ່ໄດ້ຈ່າຍຂອງທ່ານ.

ເພື່ອຫລີກລ້ຽງ TOP, ທ່ານຕ້ອງຕິດຕໍ່ຫາໜ່ວຍງານຂອງຄາວຕີ້ຂ້າງເທິງແລະເຮັດສິ່ງໜຶ່ງໃດຕໍ່ໄປນີ້ພາຍໃນ 60 ວັນນັບຈາກວັນທີແຈ້ງການນີ້:

- **ຈ່າຍໜີ້ຂອງທ່ານຄືນ**: ເພື່ອຈ່າຍໜີ້ຂອງທ່ານຄືນ, ໃຫ້ສົ່ງເຊັກຫຼື money order, ຈ່າຍຈຳນວນທີ່ທ່ານເປັນໜີ້ທັງໝົດໃຫ້ກັບ ໜ່ວຍງານຂອງຄາວຕີ້ທີ່ລະບຸໄວ້ໃນແຈ້ງການຕໍ່ໄປນີ້; ຫຼື
- ຕົກລົງກັບແຜນການຈ່າຍເງິນຄືນ ຖ້າທ່ານບໍ່ສາມາດຈ່າຍໜີ້ໄດ້ທັງໝົດ, ທ່ານຕ້ອງຕິດຕໍ່ຫາໜ່ວຍງານຂອງຄາວຕີ້ທີ່ລະບຸຢູ່ໃນແຈ້ງການນີ້, ແລະຕົກລົງກັບແຜນການຈ່າຍຄືນທີ່ທ່ານຍອມຮັບໄດ້, ແລະຈ່າຍເງິນທີ່ຕ້ອງຈ່າຍຕາມແຜນການຈ່າຍຄືນ; ຫຼື

- **ຂໍໃຫ້ມີການທົບທວນທາງດ້ານບໍລິຫານ**: ຖ້າທ່ານເຊື່ອວ່າໜີ້ສິນທັງໝົດ, ຫຼືບາງສ່ວນຍັງບໍ່ໄດ້ເກີນກໍານົດຈ່າຍ, ຫຼືບໍ່ສາມາດບັງຄັບໃຊ້ໄດ້ຢ່າງຖືກຕ້ອງຕາມກົດໝາຍ, ທ່ານຕ້ອງສົ່ງຫຼັກຖານເພື່ອສະໜັບສະໜູນທ່ານໃຫ້ກັບໜ່ວຍງານຂອງຄາວຕີ້ທີ່ລະບຸຢູ່ໃນແຈ້ງການນີ້. ທ່ານຈະໄດ້ຮັບແຈ້ງການກ່ຽວກັບການຕັດສິນໃຈຂອງຄາວຕີ້ກ່ຽວກັບໜີ້ຂອງທ່ານ. ເຫດຜົນບາງຢ່າງທີ່ທ່ານສາມາດບໍ່ເຫັນດີນໍາໜີ້ແມ່ນ: (1) ທ່ານບໍ່ເຄີຍໄດ້ຮັບ CalFresh; (2) ຈໍານວນເງິນທີ່ສະແດງໃຫ້ເຫັນວ່າເກີນກໍານົດຈ່າຍບໍ່ຖືກຕ້ອງ; ຫຼື (3) ຄາວຕີ້ບໍ່ປະຕິບັດຕາມກົດໝາຍຂອງລັດແລະກົດລະບຽບເລື່ອງ CalFresh ເມື່ອຄິດໄລ່ວ່າທ່ານເປັນໜີ້ເທົ່າໃດ; ຫຼື
- **ລົ້ມລະລາຍ**: ຖ້າທ່ານຍື່ນຂໍລົ້ມລະລາຍແລະຄໍາສັ່ງລົ້ມລະລາຍໂດຍອັດຕະໂນມັດມີຜົນບັງຄັບໃຊ້, ທ່ານຈະບໍ່ໄດ້ຮັບຜົນທີ່ຕ້ອງຈ່າຍ ຫຼື ຖືກຮຽກເກັບເງິນອື່ນໆໃນຂະນະທີ່ຄໍາສັ່ງມີຜົນບັງຄັບໃຊ້. ກະລຸນາແຈ້ງໃຫ້ໜ່ວຍງານຂອງຄາວຕີ້ທີ່ລະບຸຢູ່ໃນແຈ້ງການນີ້ຊາບ ໂດຍໃຫ້ສົ່ງຫຼັກຖານກ່ຽວກັບການລົ້ມລະລາຍນັ້ນ.

ຖ້າທ່ານຍື່ນເສຍພາສີລາຍໄດ້ຮ່ວມກັນແລະຄູ່ສົມລົດຂອງທ່ານບໍ່ແມ່ນສະມາຊິກຂອງຄົວເຮືອນ CalFresh ໃນເວລາທີ່ຈ່າຍເງິນ, ທ່ານຄວນຕິດຕໍ່ຫາ Internal RevenueService (IRS) ກ່ອນທີ່ຈະຍື່ນເສຍພາສີລາຍໄດ້ຂອງທ່ານ. IRS ຈະແຈ້ງໃຫ້ທ່ານຊາບກ່ຽວກັບຂັ້ນຕອນທີ່ຈະປະຕິບັດເພື່ອປົກປ້ອງສ່ວນແບ່ງເງິນຄືນພາສີອາກອນລາຍໄດ້ເຊິ່ງອາດຈະຕ້ອງຈ່າຍໃຫ້ກັບຄູ່ສົມລົດຂອງທ່ານ, ເຊິ່ງອາດຈະບໍ່ແມ່ນຜູ້ທີ່ເປັນໜີ້ກັບລັດຖະບານສະຫະລັດອາເມລິກາ.

ຖ້າທ່ານເປັນພະນັກງານຂອງລັດຖະບານກາງ, ເງິນຈ່າຍສຸດທິທີ່ສາມາດເອົາໄດ້ໃນປະຈຸບັນຂອງທ່ານຈະຖືກນໍາໄປຈ່າຍຖ້າທ່ານບໍ່ຈ່າຍໜີ້ຂອງທ່ານ ຫຼືບໍ່ໄດ້ກະທໍາການອື່ນໃດທີ່ໄດ້ອະທິບາຍໄວ້ໃນແຈ້ງການນີ້. ພາຍໃຕ້ TOP, Treasury ຈະຫັກສູງເຖິງ 15% ຂອງເງິນຈ່າຍສຸດທິທີ່ສາມາດເອົາໄດ້ຂອງທ່ານ ເລີ່ມຕົ້ນໃນໄລຍະການຈ່າຍທີ່ໜີ້ຂອງທ່ານຖືກສົ່ງໃຫ້ເປັນເງິນເດືອນຂອງລັດຖະບານກາງ ຫຼືຄ່າແຮງງານຊົດເຊີຍ ແລະຈະສືບຕໍ່ໃນແຕ່ລະໄລຍະການຈ່າຍຈົນກ່ວາ ໜີ້ສິນຂອງທ່ານບວກກັບຄ່າທໍານຽມ, ຄ່າປັບໃໝ, ຫຼືຄ່າອື່ນໆ. ຈະຈ່າຍເຕັມ. ເມື່ອ TOP ລະບຸວ່າທ່ານໄດ້ຮັບເງິນເດືອນຫຼືຄ່າແຮງງານຈາກລັດຖະບານກາງ, ທ່ານຈະມີສິດໄດ້ຮັບການໄຕ່ສວນເພື່ອຄັດຄ້ານວ່າໜີ້ມີຢູ່ຈິງແທ້ ຫຼືຈໍານວນໜີ້, ຫຼືຈໍານວນທີ່ຈະຫັກອອກຈາກເງິນຄ່າຈ້າງ ທ່ານຈະໄດ້ຮັບຂໍ້ມູນວ່າຈະຍື່ນຄໍາຮ້ອງຂໍເປັນລາຍລັກອັກສອນໃຫ້ມີການໄຕ່ສວນພິຈາລະນາໄດ້ທີ່ໃດ ເມື່ອ TOP ລະບຸວ່າທ່ານໄດ້ຮັບເງິນເດືອນຫຼືຄ່າແຮງງານຈາກລັດຖະບານກາງ ການຍື່ນຄໍາຮ້ອງເພື່ອຂໍໃຫ້ໄຕ່ສວນຢ່າງທັນເວລາຈະເຮັດໃຫ້ການເລີ່ມຕົ້ນຫັກເງິນເດືອນຫຼືເງິນຄ່າແຮງງານຈາກລັດຖະບານກາງຢຸດພັກ ເຖິງຢ່າງໃດກໍ່ຕາມ, ມັນຈະບໍ່ໄດ້ຢຸດການຫັກເງິນປະເພດອື່ນໆຈາກລັດຖະບານກາງ. ຄໍາຕັດສິນສຸດທ້າຍຂອງການໄຕສວນພິຈາລະນາ ຈະອອກໃຫ້ບໍ່ກາຍ 60 ວັນຫຼັງຈາກຍື່ນຄໍາຮ້ອງຂໍໃຫ້ມີການໄຕ່ສວນພິຈາລະນາ. ໃນຖານະເປັນພະນັກງານຂອງລັດຖະບານກາງ, ຖ້າທ່ານເຮັດຫຼືໃຫ້ຄໍາຖະແຫຼງ ສະແດງການຫຼືຫຼັກຖານທີ່ບໍ່ຖືກຕ້ອງ ຫຼືບໍ່ຈິງແທ້, ນອກຈາກຈະຖືກການລົງໂທດອື່ນໆ ແລ້ວ, ທ່ານກໍ່ຍັງ ອາດຈະຖືກລົງໂທດທາງວິໄນນໍາ. ເມື່ອໜີ້ສິນຂອງທ່ານຖືກສົ່ງໄປ TOP , Treasury ຈະຫຼຸດຫຼືເກັບເງິນສະຫວັດດີການຈາກລັດະບາບານກາງໃດໆ ທີ່ທ່ານມີສິດໄດ້ຮັບຕາມຈໍານວນໜີ້ຂອງທ່ານ ແລະ ອາດຈະສົ່ງໜີ້ຂອງທ່ານໃຫ້ຜູ້ຕາມເກັບໜີ້ຫຼື Department of Justice. Treasury ຈະຫັກເງິນ 15% ຂອງເງິນຊ່ວຍເຫຼືອຫຼືເງິນທີ່ໄດ້ຈາກລັດຖະບານກາງຂອງທ່ານເຊັ່ນ: ເງິນບໍານານປະກັນສັງຄົມ, ເງິນຊ່ວຍເຫຼືອ ຜູ້ລອດຊີວິດແລະຄົນພິການ, ເງິນບໍານານຈາກລົດໄຟ (ນອກເໜືອຈາກຜົນປະໂຫຍດອັນດັບທີ 2), ແລະເງິນ ສະຫວັດດີການ Black Lung Part B, ເພື່ອຊໍາລະໜີ້ຄືນ. ທ່ານອາດຈະມີສິດທີ່ຈະເກັບເງິນຢ່າງໜ້ອຍ $750 ໂດລາຕໍ່ເດືອນຫຼື $9,000 ຕໍ່ປີຈາກເງິນຂອງທ່ານທີ່ທ່ານໄດ້ຮັບຈາກລັດຖະບານກາງ. ຖ້າທ່ານໄດ້ຮັບເງິນບໍານານປະກັນສັງຄົມເພີ່ມເຕີມ (Supplemental Security Income) (SSI) ເງິນສະຫວັດດີການຄົນພິການຈາກຫ້ອງການປະກັນສັງຄົມ, ເງິນສະຫວັດດີການເຫຼົ່ານັ້ນຈະບໍ່ຖືກເອົາໄປຈ່າຍໜີ້ຂອງທ່ານ.

ຖ້າທ່ານສ້າງຫຼືເຮັດຫຼືໃຫ້ ຄໍາຖະແຫຼງ ສະແດງການ ຫຼືຫຼັກຖານທີ່ບໍ່ຖືກຕ້ອງ ຫຼືບໍ່ຈິງແທ້, ທ່ານອາດຈະມີຄວາມຜິດ ໄດ້ຮັບການລົງໂທດຕາມກົດໝາຍວ່າດ້ວຍການຮຽກຮ້ອງທີ່ບໍ່ຖືກຕ້ອງ (31 U.S.C. ¤¤3729-3731), ຫຼືກົດໝາຍອື່ນໆ ທີ່ກ່ຽວຂ້ອງ, ແລະ/ຫຼື ການລົງໂທດທາງອາຍາພາຍໃຕ້ 18 U.S.C. §§ 286, 287, 1001, ແລະ 1002, ຫຼືກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

ກ່ອນທີ່ໜີ້ຂອງທ່ານຈະຖືກສົ່ງໃຫ້ TOP, ທ່ານສາມາດ (1) ກວດສອບແລະອັດສໍາເນົາບັນທຶກຂອງຄາວຕີ້ທີ່ກ່ຽວຂ້ອງກັບໜີ້ຂອງທ່ານ, (2) ຮ້ອງຂໍໃຫ້ມີການທົບທວນຄໍາຕັດສິນຂອງຄາວຕີ້ວ່າທ່ານເປັນໜີ້ນີ້, ແລະ (3) ເຂົ້າເຮັດສັນຍາຈ່າຍຄືນທີ່ທ່ານຍອມຮັບໄດ້ໄວ້ເປັນລາຍລັກອັກສອນ.